# ໂຄງການສົ່ງເສີມໃຫ້ຄອບຄົວກຸ້ມຕົນເອງ(FSS)
# ວິທີຄຳນວນເງິນຝາກຂອງ(FSS)ສຳລັບຈ່າຍໃຫ້ຄອບຄົວ

**ກະຊວງເຄຫະສຖານແລະ**
**ການພັທນາຕົວເມືອງຂອງສຫະຣັຖ**
ກົມເຄຫະສຖານຫລວງແລະສຳລັບຊົນເຜົ່າອາເມຣິກັນອິນດຽນ

OMB ອະນຸຍາດເບີ 2577-0178
(ໝົດກຳນົດ 07/31/2010)

**ຈຳນວນເງິນທີ່ FSS ຈະຝາກໃສ່ບັນຊີໄວ້ໃຫ້ເພື່ອສຳລອງໄວ້ ຕ້ອງຄຳນວນໃໝ່ໃນແຕ່ລະເທື່ອທີ່ມີການພິຈາຣະນາການຊ່ວຍເຫລືອ ແລະການກຳນົດຊົ່ວຄາວ ທີ່ມີຂຶ້ນຫລັງຈາກທີ່ສັນຍາເຂົ້າຮ່ວມ FSS ມີຜົນໃຊ້ປະຕິບັດ ໃນລະວ່າງທີ່ຄອບຄົວເຂົ້າຮ່ວມໃນໂຄງການ FSS.**

| | |
|---|---|
| ຫົວໜ້າຄອບຄົວ FSS | ວັນທີ |
| 1. ຣາຍໄດ້ຕໍ່ປີປັດຈຸບັນ (ຂຽນຈຳນວນຢູ່ແຖວ 7i ຂອງຟອມ HUD-50058) | 1. |
| 2. ຣາຍໄດ້ຕ່ຳທີ່ສຸດ (ຂຽນຣາຍໄດ້ຕ່ຳສຸດທີ່ໃຊ້ກັນຢູ່ໃນເຂດທີ່ຄອບຄົວ FSS ອາສັຍຢູ່ປັດຈຸບັນ) | 2. |
| 3. ຣາຍໄດ້ປັດຈຸບັນທີ່ດັດແປງແລ້ວ (ຂຽນຈຳນວນຢູ່ແຖວ 8y ຂອງຟອມ HUD-50058.)<br>**ຖ້າວ່າແຖວ 3 ຫາກຫລາຍກ່ວາແຖວ 2, ຄອບຄົວບໍ່ມີສິດໄດ້ຮັບການຊ່ວຍເຫລືອ FSS.** | 3. |
| 4. ເງິນທີ່ຫາໄດ້ທີ່ລວມຢູ່ແຖວ 1 (ບວກຣາຍໄດ້ທີ່ໝາຍດ້ວຍ B, M, F, HA, ແລະ W ຢູ່ແຖວ 7f ຂອງຟອມ HUD-50058.) | 4. |
| 5. ເງິນທີ່ຫາໄດ້ທີ່ຮວມຢູ່ໃນຣາຍໄດ້ຕໍ່ປີຕອນສັນຍາ FSS ເຣີ້ມມີຜົນໃຊ້ປະຕິບັດ. (ຂຽນຈຳນວນທີ່ເອົາມາຈາກສັນຍາການເຂົ້າຮ່ວມ.) | 5. |
| 6. ຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ລົບແຖວ 5 ອອກຈາກ ແຖວ 4. ຖ້າວ່າຍັງລົບຢູ່, ຂຽນ 0 ລົງຢູ່ແຖວນີ້.) | 6. |
| 7. ຣາຍໄດ້ຕໍ່ປີປັດຈຸບັນ ລົບຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ລົບແຖວ 6 ອອກຈາກແຖວ 1.) | 7. |
| 8. ສາມສິບເປີເຊັນຂອງຣາຍໄດ້ຕໍ່ເດືອນປັດຈຸບັນແລະດັດແປງແລ້ວ (ເອົາແຖວ 3 ຫານໃຫ້ 40. ຈຳນວນທີ່ຄຳນວນອອກມາ ຄວນເທົ່າກັນກັບຈຳນວນຢູ່ແຖວ 9f ຂອງຟອມ HUD-50058.) | 8. |
| 9. ຣາຍໄດ້ປັດຈຸບັນທີ່ດັດແປງແລ້ວ ລົບຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ລົບແຖວ 6 ອອກຈາກແຖວ 3.) | 9. |
| 10. 30% ຂອງຣາຍໄດ້ຕໍ່ເດືອນຫລັງຈາກດັດແປງແລ້ວ ລົບຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ເອົາແຖວ 9 ຫານໃຫ້ 40) | 10. |
| 11. 10% ຂອງຣາຍໄດ້ຕໍ່ປີປັດຈຸບັນ ລົບຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. ( ເອົາແຖວ 7 ຫານໃຫ້ 120) | 11. |
| 12. ເງິນຊ່ວຍເຫລືອຄ່າເຊົ່າຈາກ welfare, ຖ້າມີ (ຂຽນຈຳນວນຢູ່ແຖວ 9g ຂອງຟອມ HUD-50058) ຫລືຄ່າເຊົ່າເຮືອນຫລວງທີ່ສູງສຸດ (ຂຽນຈຳນວນຢູ່ແຖວ 10c ຂອງຟອມ form HUD-50058 ລົງ) | 12. |
| 13. TTP ອີງຕາມຣາຍໄດ້ຕໍ່ປີປັດຈຸບັນ ລົບຈຳນວນເພີ່ມຂຶ້ນຂອງເງິນທີ່ຫາໄດ້ຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ຖ້າວ່າແມ່ນໂຄງການໃບອະນຸຍາດໃຫ້ເລືອກທີ່ພັກອາສັຍ, ຂຽນຈຳນວນຢູ່ແຖວ 10 ລົງ, ຖ້າບໍ່ດັ່ງນັ້ນ ຂຽນຈຳນວນທີ່ຫລາຍກ່ວາໝູ່ຈາກແຖວ 10, 11, ຫລື 12.) | 13. |
| 14. ຈຳນວນທີ່ເຫລືອ ຫລັງຈາກລົບຈຳນວນ TTP ດັດແປງຍ້ອນເງິນທີ່ຫາໄດ້ຫລາຍຂຶ້ນ ອອກຈາກ 30% ຂອງລາຍໄດ້ຕໍ່ເດືອນປັດຈຸບັນທີ່ດັດແປງແລ້ວ. (ລົບແຖວ 13 ອອກຈາກແຖວ 8. ຖ້າໄດ້ຈຳນວນລົບ ໃຫ້ຂຽນ 0 ລົງໄປ.) | 14. |
| 15. TTP ປັດຈຸບັນ (ຂຽນຈຳນວນຢູ່ແຖວ 9j ຂອງຟອມ HUD-50058 ລົງ ຫລືຖ້າແມ່ນໂຄງການໃບອະນຸຍາດໃຫ້ເລືອກທີ່ພັກອາສັຍ, ໃຫ້ຂຽນຈຳນວນຢູ່ແຖວ 8 ຂອງຟອມນີ້ລົງ.) | 15. |
| 16. TTP ໃນມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ ຫລືຖ້າແມ່ນໂຄງການໃບອະນຸຍາດໃຫ້ເລືອກທີ່ພັກອາສັຍ, 30% ຂອງຣາຍໄດ້ຕໍ່ເດືອນຫລັງຈາກດັດແປງແລ້ວຕັ້ງແຕ່ມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ຂຽນຈຳນວນຈາກສັນຍາການເຂົ້າຮ່ວມລົງ.) | 16. |
| 17. ຈຳນວນທີ່ແຕກຕ່າງລະວ່າງຈຳນວນ TTP ປັດຈຸບັນ ກັບ TTP ໃນມື້ສັນຍາການເຂົ້າຮ່ວມ FSS ເຣີ້ມມີຜົນປະຕິບັດ. (ລົບແຖວ 16 ອອກຈາກຈຳນວນຢູ່ແຖວ 15. ຖ້າໄດ້ຈຳນວນລົບ ໃຫ້ຂຽນ 0 ລົງໄປ.) | 17. |
| 18. ຂຽນຈຳນວນທີ່ໜ້ອຍກ່ວາ ລະວ່າງຈຳນວນຢູ່ແຖວ 14 ແລະແຖວ 17 ລົງ.. | 18. |
| 19. ຖ້າເປັນກໍຣະນີນີ້ ຣາຍໄດ້ຕ່ຳທີ່ສຸດ (ຂຽນຣາຍໄດ້ທີ່ຕ່ຳທີ່ສຸດສຳລັບເຂດທີ່ຄອບຄົວທີ່ເຂົ້າຮ່ວມໂຄງການ FSS ອາສັຍຢູ່.) | 19. |
| 20. ຈຳນວນຂອງຣາຍໄດ້ດັດແປງແລ້ວ ທີ່ຫລາຍກ່ວາຣາຍໄດ້ທີ່ຕ່ຳທີ່ສຸດໃນເຂດ (ລົບຈຳນວນຢູ່ແຖວ 19 ອອກຈາກຢູ່ແຖວ 3.) | 20. |
| 21. 30% ຂອງຈຳນວນຣາຍໄດ້ດັດແປງແລ້ວ ທີ່ຫລາຍກ່ວາຣາຍໄດ້ທີ່ຕ່ຳທີ່ສຸດ (ເອົາຈຳນວນຢູ່ ແຖວ 20 ຫານ ໃຫ້ 40) | 21. |
| 22. ຈຳນວນເງິນຝາກທີ່ FSS ຈະຈ່າຍໃຫ້ຄອບຄົວເພື່ອສຳລອງໄວ້ (ລົບຈຳນວນຢູ່ແຖວ 21 ອອກຈາກຈຳນວນຢູ່ແຖວ 18) | 22. |

ເອກສານ HUD ສບັບນີ້ ຖືກນຳມາເພື່ອອະທິບາຍວິທີຄຳນວນແລະເປັນເອກສານທີ່ທ່ານເລືອກໃຊ້ໄດ້. ທາງ PHA ອາດໃຊ້ວິທີຂອງຕົນເອງໃນການຄຳນວນ.

ອົງການເຄຫະສຖານ(HA)ແຕ່ລະອົງການ ຕ້ອງເຊັນສັນຍາການເຂົ້າຮ່ວມນໍາກັບແຕ່ລະຄອບຄົວທີ່ມີເງື່ອນໄຂຄົບຖ້ວນແລະປາຖນາຢາກເຂົ້າຮ່ວມນໍາໂຄງການສົ່ງເສີມໃຫ້ຄອບຄົວກຸ້ມຕົນເອງ(FSS). HA ແຕ່ລະອົງການຕ້ອງປຶກສາຫາລືກັບເຈົ້າໜ້າທີ່ທ້ອງຖິ່ນເພື່ອວາງແຜນປະຕິບັດ ທີ່ປະກອບດ້ວຍຂໍ້ມູນກ່ຽວກັບຈໍານວນ ລັກສນະ ແລະຄວາມຕ້ອງການຂອງພົລເມືອງທີ່ຈະໄດ້ຮັບການບໍຣິການຈາກໂຄງການ FSS ທີ່ສເນີຂຶ້ນມານີ້; ແລະປະກອບດ້ວຍການບໍຣິການແລະກິຈກັມຕ່າງໆຂອງໂຄງການນີ້; ວິທີການຈັດຕັ້ງປະຕິບັດໂຄງການ; ບັນດາຊັພຍາກອນທັງຂອງຫລວງແລະຂອງເອກະຊົນທີ່ຈະນໍາໃຊ້ເພື່ອສນອງການບໍຣິການແລະກິຈກັມຕ່າງໆຂອງໂຄງການ; ກໍານົດເວລາປະຕິບັດແຜນ; ແລະຂໍ້ມູນຈໍາເປັນອື່ນໆທີ່ HUD ຕ້ອງການເພື່ອຮັບປະກັນໃຫ້ມີການປະສານງານກັນຢ່າງດີໃນການບໍຣິຫານໂຄງການ.

ປະເມີນວ່າເວລາໃຊ້ໃນການເກັບກໍາຂໍ້ມູນເພື່ອຕອບຄໍາຖາມນີ້ ຄິດສເລັ່ຍຈະຕົກເປັນປະມານ1.0 ຊົ່ວໂມງ, ຊຶ່ງຮວມທັງເວລາກວດເບິ່ງຄໍາແນະນໍາ, ເວລາຄົ້ນເບິ່ງແຫລ່ງຂໍ້ມູນທີ່ມີຢູ່ແລ້ວ ເວລາຮວບຮວມແລະຮັກສາຂໍ້ມູນທີ່ຕ້ອງການແລະເວລາກວດເບິ່ງການເກັບກໍາຂໍ້ມູນ. ຈົ່ງສົ່ງຄໍາເຫັນກ່ຽວກັບການປະເມີນເວລານີ້ ຫລືລັກສນະອື່ນຂອງການເກັບກໍາຂໍ້ມູນນີ້ ຊຶ່ງຮວມທັງຄວາມຄິດເຫັນແລະຂໍ້ສເນີວ່າຈະຫຍໍ້ເວລານີ້ໄດ້ແນວໃດ ໄປຍັງເຈົ້າໜ້າທີ່ຮັບຜິດຊອບລາຍງານຕ່າງໆໃນໂຄງການປະຢັດເວລາ(2577-0178), ທີ່ຫ້ອງການວ່າດ້ວຍເຕັກນິກໃນການເກັບກໍາແລະຮັກສາຂໍ້ມູນ (Office of Information Technology), ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖ ທີ່ກຸງວໍຊິງຕັນ ດີຊີ 20410-3600.

ຢ່າສົ່ງໃບຟອມນີ້ໄປໃຫ້ຫ້ອງການທີ່ກ່າວຢູ່ຂ້າງເທິງນີ້.

ອີງຕາມກົດໝາຍວ່າດ້ວຍການເຄຫະສຖານ ສບັບປີ 1937, ວັກ 23(c) ແລະ 23(g) ແລະສບັບສມູນໂດຍ ວັກ 554 ຂອງກົດໝາຍວ່າດ້ວຍເຄຫະສຖານໃນລາຄາຍ່ອມເຍົາ (Cranston-Gonzalez National Affordable Housing Act) PL 101-625, ຖ້າທ່ານຢາກເຂົ້າຮ່ວມໃນໂຄງການ FSS ທ່ານຈໍາເປັນຕ້ອງໃຫ້ຂໍ້ມູນທີ່ທາງການຕ້ອງການ.

ຂໍ້ມູນທີ່ເກັບກໍາມານີ້ ຖືວ່າເປັນຄວາມລັບແລະປົກປ້ອງໂດຍກົດໝາຍວ່າດ້ວຍການຮັກສາຄວາມລັບສ່ວນບຸກຄົນ. ທ່ານສາມາດສບາຍໃຈໄດ້ວ່າບັນທຶກເຫລົ່ານີ້ຈະໄດ້ຮັບການຮັກສາໄວ້ຢ່າງປອດພັຍທາງດ້ານການປົກຄອງ, ດ້ານເຕັກນິກແລະດ້ານອື່ນໆທີ່ເໝາະສົມ ເພື່ອໃຫ້ແນ່ໃຈວ່າປອດພັຍແລະເປັນຄວາມລັບ. ນອກຈາກນັ້ນ ບັນທຶກເຫລົ່ານີ້ຄວນໄດ້ຮັບການປ້ອງກັນໄວ້ຈາກພັຍອັນຕຣາຍທີ່ຄາດໝາຍໄດ້ລ່ວງໜ້າໃດໆກໍຕາມ ທີ່ຈະຂົ່ມຂູ່ຕໍ່ຄວາມປອດພັຍແລະຄວາມຄົບຖ້ວນຂອງຂໍ້ມູນ ຊຶ່ງອາດຈະນໍາມາຊຶ່ງຄວາມເສັຍຫາຍຢ່າງໃຫຍ່ຫລວງ, ຄວາມອັບອາຍຂາຍໜ້າ ແລະສ້າງບັນຫາຫຍຸ້ງຍາກ ຫລືຄວາມບໍ່ຍຸຕິທັມ ໃຫ້ແກ່ບຸກຄົນທີ່ໄດ້ໃຫ້ຂໍ້ມູນເຫລົ່ານັ້ນມາ.

<u>HUD ບໍ່ມີສິດທີ່ຈະເກັບກໍາຂໍ້ມູນ ຫລືສນັບສນູນໃຫ້ມີການເກັບກໍາຂໍ້ມູນ ແລະບຸກຄົນຜູ້ໃດກໍບໍ່ຈໍາເປັນຕ້ອງໃຫ້ຂໍ້ມູນ ນອກຈາກວ່າໃນໃບຟອມນັ້ນຈະມີນໍາເບີກວດຂອງ OMB ທີ່ຍັງບໍ່ໝົດອາຍຸໃຊ້ເທື່ອ.</u>

## ຄໍາແນະນໍາເພື່ອຄິດໄລ່ບັນຊີເງິນຝາກສໍາລອງຂອງ FSS ສໍາລັບຈ່າຍໃຫ້ຄອບຄົວ

1. ຈໍານວນເງິນທີ່ FSS ຈະຝາກໃສ່ບັນຊີໄວ້ໃຫ້ເພື່ອສໍາລອງໄວ້ ຕ້ອງຄໍານວນໃໝ່ໃນແຕ່ລະເທື່ອທີ່ມີການພິຈາຣະນາການຊ່ວຍເຫລືອ ແລະການກໍານົດຊົ່ວຄາວທີ່ມີຂຶ້ນ ຫລັງຈາກທີ່ສັນຍາເຂົ້າຮ່ວມ FSS ມີຜົນໃຊ້ປະຕິບັດ ໃນລະວ່າງທີ່ຄອບຄົວເຂົ້າຮ່ວມໃນໂຄງການ FSS.

2. ສາມາດຄິດໄລ່ຈໍານວນເງິນທີ່ຈະເອົາໄປໃສ່ບັນຊີເງິນຝາກສໍາລອງໄວ້ນັ້ນໂດຍໃຊ້ຟອມ HUD-52652, ຫລືເອກສານສບັບອື່ນທີ່ຮວບຮວມຣະບຽບຕ່າງໆໃນຟອມ HUD-52652 ໄວ້.

3. ຈໍານວນເງິນທີ່ນໍາໄປໃສ່ບັນຊີຝາກໃຫ້ຄອບຄົວນັ້ນ ຈະຫລາຍຫລືໜ້ອຍ ແມ່ນຂຶ້ນຢູ່ກັບຣະດັບຣາຍໄດ້ຂອງແຕ່ລະຄອບຄົວທີ່ເຂົ້າຮ່ວມໃນໂຄງການ FSS ແລະອ້າງອີງໃສ່ **ຈໍານວນເງິນທີ່ຫາໄດ້** ທີ່ເພີ່ມຂຶ້ນນັບຕັ້ງແຕ່ເວລາທີ່ສັນຍາເຂົ້າຮ່ວມໂຄງການມີຜົນໃຊ້ປະຕິບັດ. ຖ້າຣາຍໄດ້ຂອງຄອບຄົວຫລັງຈາກທີ່ເສັຍພາສີອາກອນແລະຄ່າຕ່າງໆແລ້ວ ຫາກສູງກ່ວາຣະດັບຣາຍໄດ້ຂັ້ນຕໍ່າໃນຂົງເຂດທີ່ອາສັຍຂອງຄອບຄົວ FSS (ຈໍານວນຢູ່ແຖວທີ 3 ສູງກ່ວາຈໍານວນຢູ່ແຖວທີ 2), ໝາຍຄວາມວ່າຄອບຄົວບໍ່ມີເງື່ອນໄຂພຽງພໍທີ່ຈະໄດ້ຮັບເງິນຊ່ວຍເຫລືອໃສ່ບັນຊີເງິນຝາກ. ໃນກໍຣະນີນີ້ ບໍ່ຈໍາເປັນຕ້ອງຂຽນຫຍັງໃສ່ແຖວ 4 ຫາ ແຖວ 22.

***ເອກສານສບັບນີ້ ແມ່ນແປມາຈາກເອກສານດ້ານກົດໝາຍສບັບຕ່າງໆ ທີ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສຫະຣັຖໄດ້ນໍາອອກເຜີຍແຜ່. ທາງກະຊວງເຄຫະສຖານແລະການພັທນາຕົວເມືອງ ໄດ້ຈັດເອກສານແປເປັນພາສາລາວສບັບນີ້ ໄວ້ສນອງທ່ານເພື່ອອໍານວຍຄວາມສດວກແລະຊ່ວຍໃຫ້ທ່ານສາມາດເຂົ້າໃຈໃນສິດທິແລະພັນທະໜ້າທີ່ຂອງທ່ານ. ສໍາເນົາພາສາອັງກິດຂອງເອກສານສບັບນີ້ເທົ່ານັ້ນ ທີ່ເປັນເອກສານທາງການ ແລະມີອໍານາດຜູກມັດທາງດ້ານກົດໝາຍ. ເອກສານທີ່ແປອອກມາເປັນພາສາລາວສບັບນີ້ ບໍ່ແມ່ນເອກສານທາງການແຕ່ຢ່າງໃດ.***